ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------&&&--------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1971 /ອຄ.ທອຄ

ນະຄອນຫຼວງວຽງຈັນ, ວັນທີ 24 ກັນຍາ 2015

# ແຈ້ງການ

## ກ່ຽວກັບ ການສະຫລຸບ ຕີລາຄາ ປະເມີນຜົນການຈັດຕັ້ງປະຕິບັດມະຕິ 3 ສ້າງ ໃນວຽກງານຂະແໜງອຸດສາຫະກຳ ແລະ ການຄ້າ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມແຜນການ ແລະ ການຮ່ວມມື
ຂາເຂົ້າ ເລກທີ 1078
ວັນທີ 28/9/15

ເຖິງ:
- ທ່ານ ຫົວໜ້າຫ້ອງການ, ບັນດາທ່ານຫົວໜ້າກົມ, ຫົວໜ້າສະຖາບັນ
- ບັນດາທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ,
- ບັນດາທ່ານຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ເທດສະບານ ເປົ້າໝາຍ 3 ສ້າງ

- ອີງຕາມມະຕິຂອງກົມການເມືອງສູນກາງພັກ, ເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012, ວ່າດ້ວຍການສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ;

- ອີງຕາມຄຳແນະນຳຂອງທ່ານລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ, ເລກທີ 1902/ອຄ, ລົງວັນທີ 7 ກັນຍາ 2012 ວ່າດ້ວຍການເຮັດທົດລອງວຽກງານ 3 ສ້າງຂອງຂະແໜງອຸດສາຫະກຳ ແລະ ການຄ້າ;

- ອີງຕາມຄຳສັ່ງຂອງທ່ານ ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ, ເລກທີ 1903/ອຄ, ລົງວັນທີ 7 ກັນຍາ 2012 ກ່ຽວກັບການຈັດຕັ້ງປະຕິບັດມະຕິ 3 ສ້າງໃນວຽກງານຂະແໜງ ອຄ, ຂໍ້ 6.

ຜ່ານການຕິດຕາມສະພາບການຈັດຕັ້ງປະຕິບັດວຽກງານເຮັດທົດລອງ 3 ສ້າງ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ນັບແຕ່ເດືອນ 10/2012 ເປັນຕົ້ນມາ ຮອດປະຈຸບັນ ເຫັນໄດ້ວ່າ ຄະນະພັກທຸກຂັ້ນໄດ້ຍົກສູງຄວາມຮັບຜິດຊອບຂອງຕົນໃນການຊີ້ນຳ-ນຳພາ ແລະ ຈັດຕັ້ງປະຕິບັດ ມະຕິ 3 ສ້າງ ຂອງກົມການເມືອງ ກໍຄື ຄຳແນະນຳຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການເຮັດທົດລອງວຽກງານ 3 ສ້າງ ດ້ວຍຄວາມເປັນເຈົ້າການ, ມີຜົນສຳເລັດທີ່ເປັນຮູບປະທຳໃນຫຼາຍດ້ານ ແລະ ສາມາດຖອດຖອນບົດຮຽນເບື້ອງຕົ້ນໄດ້ຈຳນວນໜຶ່ງ ຄຽງຄູ່ກັນນັ້ນ ກໍມີບາງທ້ອງຖິ່ນທີ່ຍັງພົບຄວາມຫຍຸ້ງຍາກໃນຂອດການ

ຈັດຕັ້ງປະຕິບັດ, ໂດຍສະເພາະຕິດພັນກັບດ້ານນິຕິກຳ, ລະບຽບການ, ກົນໄກການປະສານງານ, ບຸກຄະລາກອນ, ດ້ານງົບປະມານ ແລະ ອື່ນໆ.

ສະນັ້ນ, ເພື່ອເປັນການກວດກາ, ຕີລາຄາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃນຂົງເຂດອຸດສາຫະກຳ ແລະ ການຄ້າ ໃນບັ້ນເຮັດທົດລອງ 3 ປີ ຜ່ານມາ (ນັບແຕ່ເດືອນ 10/2012-10/2015) ແລະ ເພື່ອເປັນການກະກຽມເນື້ອໃນລາຍງານຕໍ່ກອງປະຊຸມຄະນະບໍລິຫານງານສູນກາງພັກ, ຊຶ່ງຈະຈັດຂຶ້ນໃນເດືອນ ພະຈິກ 2015 ແລະ ກະກຽມໃຫ້ແກ່ບັ້ນສະຫຼຸບ ຕີລາຄາ ແລະ ຖອດຖອນບົດຮຽນການຈັດຕັ້ງເຮັດທົດລອງວຽກງານ 3 ສ້າງໃນຂອບເຂດທົ່ວປະເທດ, ຊຶ່ງຈະຈັດຂຶ້ນໃນທ້າຍປີ 2015 ຕາມການຊີ້ນຳຂອງຄະນະຮັບຜິດຊອບເຮັດທົດລອງ ວຽກງານ 3 ສ້າງຂັ້ນສູນກາງ, ລົງວັນທີ 16 ກັນຍາ 2015 ແລະ ທັງເປັນການກະກຽມແກ່ການຈັດຕັ້ງຜັນຂະຫຍາຍ ວຽກງານ 3 ສ້າງໃນຂົງເຂດອຸດສາຫະກຳ ແລະ ການຄ້າ ໃນບາດກ້າວຕໍ່ໄປ ໃຫ້ໄດ້ຮັບຜົນດີ.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ,**
**ຫົວໜ້າຄະນະຮັບຜິດຊອບຊີ້ນຳວຽກງານເຮັດທົດລອງ 3 ສ້າງຂັ້ນກະຊວງ ອອກແຈ້ງການ:**

1. ໃຫ້ຫ້ອງການ, ບັນດາກົມ, ສະຖາບັນ, ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ ແລະ ບັນດາແຂວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ພ້ອມກັນຍົກສູງຄວາມຮັບຜິດຊອບ, ຄວາມເປັນເຈົ້າການ ແລະ ເອົາໃຈໃສ່ໃນການສະຫລຸບ ຕີລາຄາ ປະເມີນຜົນ ແລະ ຖອດຖອນບົດຮຽນ ສະພາບການຈັດຕັ້ງປະຕິບັດວຽກງານ 3 ສ້າງໃນຂົງເຂດວຽກງານຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຕາມໜ້າວຽກ, ວິທີການ, ບາດກ້າວທີ່ໄດ້ກຳນົດໄວ້ໃນແຜນດຳເນີນງານຂອງຄະນະຮັບຜິດຊອບຈັດຕັ້ງປະຕິບັດເຮັດທົດລອງ 3 ສ້າງຂັ້ນກະຊວງ ສະບັບເລກທີ 1852/ອຄ, ລົງວັນທີ 4 ກັນຍາ 2012; ຄຳແນະນຳຂອງລັດຖະມົນຕີວ່າການ ກ່ຽວກັບ ການເຮັດທົດລອງ 3 ສ້າງ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1902/ອຄ, ລົງວັນທີ 7 ກັນຍາ 2012;

2. ບົນພື້ນຖານການສະຫຼຸບ ຕີລາຄາ ປະເມີນຜົນ ແລະ ຖອດຖອນບົດຮຽນ ການຈັດຕັ້ງເຮັດທົດລອງ ໃນໄລຍະ 3 ປີຜ່ານມານັ້ນ, ໃຫ້ແຕ່ລະພາກສ່ວນຄົ້ນຄວ້າ ເພື່ອກຳນົດບັນດາທິດທາງ ໜ້າທີ່ ແລະ ແຜນວຽກຈຸດສຸມ ເພື່ອສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານ 3 ສ້າງໃນຂົງເຂດອຸດສາຫະກຳ ແລະ ການຄ້າໃນຕໍ່ໜ້າ ແນໃສ່ຜັນຂະຫຍາຍມະຕິເລກທີ 25 ຂອງກົມການເມືອງ ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານ ເປັນຫົວໜ່ວຍພັດທະນາໃຫ້ໄດ້ຮັບຜົນດີ;

3. ສ່ວນວິທີການ ແລະ ຮູບການຈັດຕັ້ງການສະຫຼຸບ ຕີລາຄາ ປະເມີນຜົນ ແລະ ຖອດຖອນບົດຮຽນ ແມ່ນມອບໃຫ້ຄະນະຮັບຜິດຊອບຊີ້ນຳວຽກງານ 3 ສ້າງຂັ້ນຕ່າງໆ ເປັນເຈົ້າການ ໂດຍໃຫ້ມີການປະສານສົມທົບ, ປຶກສາຫາລື ແລະ ເປັນເອກະພາບພາຍໃນຄະນະພັກ-ຄະນະນຳຂັ້ນຂອງຕົນ. ສຳລັບກົມ

ກອງ ທ້ອງຖິ່ນໃດທີ່ມີເງື່ອນໄຂ ຫຼື ຢາກຈັດກອງປະຊຸມ ເພື່ອສະຫຼຸບ ຖອດຖອນບົດຮຽນ ກໍສາມາດຈັດຕັ້ງປະຕິບັດໄດ້;

4. ການສະຫລຸບ ຕີລາຄາ ປະເມີນຜົນ ແລະ ຖອດຖອນບົດຮຽນການຈັດຕັ້ງເຮັດທົດລອງ 3 ສ້າງ ໃນຂົງເຂດວຽກງານອຸດສາຫະກຳ ແລະ ການຄ້າ ຕົ້ນຕໍແມ່ນໃຫ້ອີງໃສ່ເນື້ອໃນ/ຫົວຂໍ້ເຈາະຈີ້ມ ທີ່ກອງເລຂາໄດ້ກະກຽມ ແລະ ຄັດຕິດເປັນເອກະສານຊ້ອນທ້າຍມາພ້ອມກັບແຈ້ງການສະບັບນີ້ ເພື່ອໃຫ້ແຕ່ລະພາກສ່ວນມີຈຸດສຸມໃນການລາຍງານ;

5. ກຳນົດເວລາສົ່ງບົດສະຫຼຸບ ແມ່ນບໍ່ໃຫ້ກາຍອາທິດທີ 1 ຂອງເດືອນຕຸລາ 2015 ເພື່ອໃຫ້ກອງເລຂາ ໄດ້ສະຫຼຸບສັງລວມ ແລະ ລາຍງານຕໍ່ຄະນະຮັບຜິດຊອບຊີ້ນໍາວຽກງານ 3 ສ້າງຂັ້ນກະຊວງ ແລະ ຄະນະຊີ້ນໍາຂັ້ນສູນກາງ ຕໍ່ໄປ;

6. ຄະນະຮັບຜິດຊອບວຽກງານ 3 ສ້າງຂັ້ນກະຊວງ, ຂັ້ນທ້ອງຖິ່ນ ( ພະແນກ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ) ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ;

7. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ,**
**ຫົວໜ້າຄະນະຮັບຜິດຊອບຊີ້ນຳເຮັດທົດລອງ 3 ສ້າງຂັ້ນກະຊວງ**

ກະຊວງອຸດສາຫະກຳແລະການຄ້າ
ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ

**ບ່ອນສົ່ງ:**

- ບັນດາທ່ານລັດຖະມົນຕີຊ່ວຍວ່າການ
- ສຳເນົາ 02 ສະບັບ

## ຫົວຂໍ້ເຈາະຈີ້ມ

## ເພື່ອເປັນບ່ອນອີງໃນການສະຫຼຸບ ຕີລາຄາ ແລະ ປະເມີນຜົນການ ເຮັດທົດລອງ ວຽກງານ 3 ສ້າງໃນຂົງເຂດອຸດສາຫະກຳ ແລະ ການຄ້າ

I ສຳລັບບັນດາກົມເປົ້າໝາຍເຂົ້າຮ່ວມເຮັດທົດລອງ 3 ສ້າງ

1 ການຫັນກະຊວງໄປເຮັດພາລະບົດບາດຄຸ້ມຄອງມະຫາພາກຕາມ 5 ເນື້ອໃນ (ເປັນຕົ້ນ: ການຄົ້ນຄ້ວາສ້າງແຜນຍຸດທະສາດ, ແຜນພັດທະນາຂອງຂະແໜງການ; ການຄົ້ນຄ້ວາປັບປຸງ ຫຼື ອອກນະໂຍບາຍ, ກົດໝາຍ ແລະ ນິຕິກຳສຳລັບການຄຸ້ມຄອງມະຫາ ພາກຂອງຂະແໜງການ; ການຂຶ້ນແຜນກຳນົດ ແລະ ບຳລຸງສ້າງພະນັກງານ ໃນທົ່ວລະບົບ; ການຄົ້ນຄ້ວາວິທະຍາສາດ ແລະ ເຜີຍແຜ່ແນະນຳການນຳໃຊ້ວິທະຍາສາດ ວິທະຍາການໃໝ່; ການຕິດຕາມ ກວດກາ ປະເມີນຜົນ ແລະ ຊ່ວຍຊູຍູ້ໜູນທ້ອງຖິ່ນ ໃນການປະຕິບັດນະໂຍບາຍ, ກົດໝາຍ ແລະ ວຽກງານຕ່າງໆ ຂອງຂະແໜງການ) ມີຜົນສຳເລັດ, ມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກແນວໃດ ແລະ ຍ້ອນສາເຫດຫຍັງ?

2 ອີງຕາມໜ້າວຽກຂອງບັນດາກົມທີ່ໄດ້ກຳນົດໃນຄຳແນະນຳຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1902/ອຄ, ລົງວັນທີ 7 ກັນຍາ 2012 ໃຫ້ກວດກາ ຕີລາຄາຄືນວ່າ ການມອບວຽກ, ມອບຄວາມຮັບຜິດຊອບ, ການມອບສິດ ຕິດພັນກັບການແບ່ງປັນຜົນປະໂຫຍດ ໃຫ້ແກ່ທ້ອງຖິ່ນ (ແຂວງ, ເມືອງ ແລະ ບ້ານ) ເຫັນວ່າຂາດຕົວແລ້ວບໍ່(ຂໍໃຫ້ຍົກຕົວຢ່າງມາຢັ້ງຢືນວ່າວຽກໃດທີ່ມອບຂາດຕົວແລ້ວ ແລະ ວຽກໃດທີ່ຍັງມອບບໍ່ທັນຂາດຕົວ) ຫຼື ມີວຽກໃດທີ່ມອບແຕ່ນິຕິກຳ ແຕ່ຂອດຈັດຕັ້ງປະຕິບັດຕົວຈິງແມ່ນຍັງຂຶ້ນກັບຂັ້ນສູນກາງຢູ່, ຍັງຄ້າງຄາບັນຫາໃດ ແລະ ຍ້ອນສາເຫດຫຍັງ?

3 ນິຕິກຳທີ່ບັນດາກົມວາງອອກ ແລະ ຈັດຕັ້ງປະຕິບັດໃນໄລຍະເຮັດທົດລອງ 3 ສ້າງ ນັ້ນ, ຖືກຕ້ອງສອດຄ່ອງແນວໃດ? ອັນໃດບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບສະພາບການຕົວຈິງຂອງທ້ອງຖິ່ນ ແລະ ຜ່ານມາ ໄດ້ດຳເນີນການປັບປຸງ ແກ້ໄຂແລ້ວມີນິຕິກຳໃດແດ່(ຂໍໃຫ້ຍົກຕົວຢ່າງ)?

4 ສະພາບການບັນຈຸ ສັບຊ້ອນ ແລະ ຄຸ້ມຄອງພະນັກງານຢູ່ແຂວງ ແລະ ເມືອງເປົ້າໝາຍເຮັດທົດລອງ 3 ສ້າງ ໃນໄລຍະ 3 ປີຜ່ານມາມີຂໍ້ສະດວກ ຂໍ້ຫຍຸ້ງຍາກແນວໃດ ? ໂຄຕ້າລັດຖະກອນທີ່ກະຊວງຕົກລົງ ແບ່ງໃຫ້ແຂວງ ແລະ ເມືອງ 3 ສ້າງໃນແຕ່ລະປີ ມີຈຳນວນເທົ່າໃດ? ໃນນີ້, ໄດ້ໃຫ້ບູລິມະສິດແນວໃດ ຕໍ່ແຂວງ ແລະ ເມືອງ ສ້າງໃໝ່? ພ້ອມນີ້, ກະຊວງໄດ້ຊ່ວຍແຂວງແນວໃດ ໃນການບຳລຸງ ກໍ່ສ້າງພະນັກງານ ເພື່ອໃຫ້ສາມາດຕອບສະໜອງກັບຄວາມຕ້ອງການ ໃນສະເພາະໜ້າ ແລະ ຍາວນານ?

**II ສຳລັບພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງ ແລະ ບັນດາແຂວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ-ເທດສະບານ**

1 ອີງຕາມຄຳແນະນຳຂອງລັດຖະມົນຕີວ່າການ ສະບັບເລກທີ 1902/ອຄ ລົງວັນທີ 7 ກັນຍາ 2012 ວ່າດ້ວຍການເຮັດທົດລອງ 3 ສ້າງຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງ ແລະ ບັນດາແຂວງ ໄດ້ຜັນຂະຫຍາຍອອກເປັນນິຕິກຳ ໃນການເຮັດທົດລອງ 3 ສ້າງຢູ່ຂະແໜງການສາຍຕັ້ງຂອງຕົນຄືແນວໃດ?(ໃຫ້ຄັດຕິດນິຕິກຳແບ່ງຂັ້ນຄຸ້ມຄອງມາພ້ອມ)

2 ເນື້ອໃນການການແບ່ງຂັ້ນຄຸ້ມຄອງ : ການມອບວຽກ, ມອບຄວາມຮັບຜິດຊອບ, ມອບສິດຕິດພັນກັບການແບ່ງປັນຜົນປະໂຫຍດ ລະຫວ່າງ ພະແນກ ອຄ ນະຄອນຫລວງ, ບັນດາແຂວງ , ຫ້ອງການ

ອຸດສາຫະກຳ ແລະ ການຄ້າເມືອງ ແລະ ບ້ານ ໄດ້ພິຈາລະນາ ບົນຫຼັກການ ແລະ ຕາມຄວາມເໝາະສົມ ແນວໃດ? ໃນນີ້, ແຂວງ ໄດ້ມອບວຽກ, ມອບຄວາມຮັບຜິດຊອບ, ມອບສິດ ແລະ ຜົນປະໂຫຍດໃຫ້ເມືອງ ແລະ ເມືອງໄດ້ມອບໃຫ້ບ້ານ ມີຈັກວຽກ, ຈັກກິດຈະກຳ ແລະ ມີຜົນປະໂຫຍດອັນໃດແດ່ (ຂໍໃຫ້ຍົກຕົວຢ່າງ ເພື່ອມາຢັ້ງຢືນ). ການມອບວຽກ, ມອບຄວາມຮັບຜິດຊອບ, ມອບສິດ ແລະ ແບ່ງປັນຜົນປະໂຫຍດນັ້ນ ຂາດຕົວແລ້ວບໍ່ ຫຼືຍັງຄ້າງຄາບັນຫາໃດ? ສາເຫດຍ້ອນຫຍັງ? ຜ່ານການຈັດຕັ້ງປະຕິບັດມີຜົນສຳເລັດ, ຂໍ້ຈຳກັດ ຂໍ້ຂະດວກ ແລະ ຂໍ້ຫຍຸ້ງຍາກຄືແນວໃດ ? ວຽກທີ່ແຂວງມອບໃຫ້ເມືອງ ແລະ ເມືອງມອບໃຫ້ບ້ານ ສາມາດຈັດຕັ້ງປະຕິບັດເປັນຮູບປະທຳມີຈັກວຽກ, ປະຕິບັດບໍ່ທັນໄດ້ມີຈັກວຽກ ສາເຫດ ຍ້ອນຫຍັງ?

- ວຽກໃດທີ່ແຂວງເຫັນວ່າ ກະຊວງຄວນຈະມອບລົງໃຫ້ທ້ອງຖິ່ນຕື່ມ(ຂໍໃຫ້ລະບຸແຈ້ງກ່ຽວກັບ ເນື້ອໃນວຽກ, ສິດ ແລະ ຜົນປະໂຫຍດທີ່ທ້ອງຖິ່ນຄວນຈະໄດ້ຮັບ)

3 ການມອບວຽກ, ມອບຄວາມຮັບຜິດຊອບ, ມອບສິດ ແລະ ຜົນປະໂຫຍດ ໃຫ້ບ້ານ ໄດ້ປະຕິບັດຜ່ານກົນໄກ ແລະ ວິທີການຄືແນວໃດ? ເປັນຕົ້ນ: ການມອບວຽກ-ມອບສິດ ໄດ້ຕິດພັນກັບການຝຶກອົບຮົມ-ຍົກລະດັບ ໃຫ້ພະນັກງານທີ່ຮັບຜິດຊອບວຽກງານຂອງຂະແໜງ ອຄ ຢູ່ຂັ້ນບ້ານ ; ໄດ້ມີບົດແນະນຳ, ຄູ່ມື ຈັດຕັ້ງປະຕິບັດ ໃຫ້ບ້ານ ; ໄດ້ມີການແຕ່ງຕັ້ງໜ່ວຍງານຢູ່ຂັ້ນບ້ານ ເພື່ອຮັບຜິດຊອບ ; ໄດ້ມີການລົງຊຸກຍູ້ ຕິດຕາມ ກວດກາ ຢ່າງເປັນປົກກະຕິ...ຜ່ານການຈັດຕັ້ງປະຕິບັດຕົວຈິງຜ່ານມາ ເຫັນວ່າ ວຽກຂົງເຂດໃດ ທີ່ມີຄວາມຈຳເປັນຕ້ອງ ມອບໃຫ້ບ້ານເປັນຜູ້ຈັດຕັ້ງປະຕິບັດຊ່ວຍຂະແໜງການພວກເຮົາ ແລະ ວຽກງານຂົງເຂດໃດບໍ່ຄວນມອບ ລົງໃຫ້ບ້ານ, ສາເຫດຍ້ອນຫຍັງ? ໃນຕໍ່ໜ້າເຫັນມີຄວາມຈຳເປັນຕ້ອງສ້າງໜ່ວຍງານຂອງຂະແໜງ ອຄ ຢູ່ຂັ້ນບ້ານບໍ່?

4 ນິຕິກຳທີ່ກະຊວງ(ບັນດາກົມ) ວາງອອກ ເພື່ອນຳໃຊ້ເຂົ້າໃນບັ້ນເຮັດທົດລອງ 3 ສ້າງ ມີອັນໃດທີ່ເຫັນວ່າຖືກຕ້ອງ ສອດຄ່ອງ ຫຼື ສາມາດຈັດຕັ້ງປະຕິບັດໄດ້ ແລະ ມີອັນໃດທີ່ເຫັນວ່າ ບໍ່ຖືກຕ້ອງ ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ ແລະ ເຫັນຄວນສະເໜີໃຫ້ມີການປັບປຸງໃນຈຸດໃດ(ຂໍໃຫ້ລະບຸແຈ້ງນິຕິກຳຂົງເຂດໃດ, ໝວດ ຫຼື ມາດຕາໃດທີ່ເຫັນຄວນຕ້ອງໄດ້ປັບປຸງ ແລະ ຄວນປັບປຸງແນວໃດ)?

5 ອີງຕາມຂໍ້ມູນການລົງເກັບກຳຕົວຈິງຂອງຄະນະຮັບຜິດຊອບຊີ້ນຳຂັ້ນສູນກາງ ໃຫ້ຮູ້ວ່າ ມີບາງທ້ອງຖິ່ນ ຫົວໜ່ວຍວິສາຫະກິດຈຳນວນໜຶ່ງມີແຕ່ຊື່ ແຕ່ບໍ່ມີຕົວຕົນ ຫຼື ບໍ່ມີການເຄື່ອນໄຫວ ພາຍຫຼັງການຂຶ້ນທະບຽນວິສາຫະກິດ ຕໍ່ບັນຫານີ້ ຢູ່ທ້ອງຖິ່ນຂອງທ່ານ ມີສະພາບຄືດັ່ງກ່າວບໍ່, ມີຈຳນວນຈັກຫົວໜ່ວຍ ແລະ ສາເຫດ ຍ້ອນຫຍັງ? ເພື່ອເຮັດໃຫ້ການຄຸ້ມຄອງຫົວໜ່ວຍວິສາຫະກິດພາຍຫຼັງຂຶ້ນທະບຽນແລ້ວເຂົ້າ ສູ່ລະບຽບ ແລະ ສາມາດຕິດຕາມ ກວດກາໄດ້ນັ້ນ ທ່ານເຫັນວ່າຄວນປັບປຸງ ແກ້ໄຂບັນຫາໃດແດ່ ໂດຍສະເພາະໃນດ້ານນິຕິກຳ? ໃນຕໍ່ໜ້າ ຄວນແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງ, ຕິດຕາມ ກວດກາຫົວໜ່ວຍຜູ້ປະກອບກິດຈະການ ຫຼື ຫົວໜ່ວຍຜະລິດ, ທຸລະກິດ ໃຫ້ເມືອງ ແລະ ບ້ານຄືແນວໃດ?

6 ໂຄງການສົ່ງເສີມການຜະລິດເປັນສິນຄ້າ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ທີ່ໄດ້ຈັດຕັ້ງປະຕິບັດຢູ່ບັນດາເມືອງ ແລະ ບ້ານເປົ້າໝາຍ 3 ສ້າງ ໃນໄລຍະ 03 ປີຜ່ານມາ ມີທັງໝົດຈັກໂຄງການ, ມູນຄ່າເທົ່າໃດ? ໃນນີ້, ເປັນໂຄງການທີ່ໄດ້ຮັບງົບປະມານລົງທຶນຂອງລັດ ຈັກໂຄງການ, ມູນຄ່າເທົ່າໃດ ? ໂຄງການລົງທຶນຂອງພາກເອກະຊົນ ຈັກໂຄງການ, ມູນຄ່າເທົ່າໃດ? ໂຄງການທີ່ໄດ້ຮັບທຶນສະໜັບສະໜູນຈາກຕ່າງປະເທດ(ຖ້າມີ) ຈັກໂຄງການ, ມີມູນຄ່າເທົ່າໃດ ?. ໃນໄລຍະຜ່ານມາ, ແຂວງໄດ້ມີມາດຕະການກະຕຸກ ຊຸກຍູ້ຕົວຈິງຄືແນວໃດ ເພື່ອໃຫ້ການຜະລິດສິນຄ້າມີຄວາມຍືນຍົງ ຕິດພັນກັບຕະຫຼາດ ແລະ ການ

ປຸງແຕ່ງ? ຕໍ່ບັນຫາທີ່ສັງຄົມເຄີຍຕັ້ງຂຶ້ນໃນໄລຍະຜ່ານມາວ່າ " ຜະລິດອອກມາແລ້ວ ແຕ່ບໍ່ມີຕະຫຼາດຈຳໜ່າຍ ", " ຜະລິດອອກມາຫຼາຍ ຂາຍບໍ່ອອກ" ຫຼື "ສິ່ງເສີມປະຊາຊົນໄປແລ້ວ ແຕ່ຍັງມີຄວາມສ່ຽງດ້ານຕະຫຼາດ, ດ້ານລາຄາ"...ສະພາບເຊັ່ນນີ້ ໄດ້ເກີດມີຢູ່ໃນທ້ອງຖິ່ນຂອງທ່ານບໍ? ແລະ ໄດ້ມີວິທີການ, ມາດຕະການແກ້ໄຂ ຄືແນວໃດ?

III ຕີລາຄາຜົນໄດ້ຮັບໃນການຈັດຕັ້ງເຮັດທົດລອງຜ່ານມາ

ສຳລັບພາກຕີລາຄາຜົນໄດ້ຮັບນີ້, ໃຫ້ລົງເລິກຕີລາຄາດ້ານດີ, ດ້ານຕັ້ງໜ້າ, ດ້ານອ່ອນ ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້ຕາມສະພາບ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນ, ແຕ່ອັນສຳຄັນແມ່ນຢາກໃຫ້ມີການສົມທຽບສະພາບ ກ່ອນ ແລະ ຫຼັງການເຮັດທົດລອງ 3 ສ້າງ ວ່າໄດ້ເກີດມີປັດໄຈໃໝ່ ຫຼື ເກີດມີການປ່ຽນແປງຫຍັງແດ່ໃນດ້ານການຄຸ້ມຄອງ-ບໍລິຫານລັດຂອງຂະແໜງການ ເປັນຕົ້ນ: ໃນດ້ານຄວາມຮັບຮູ້ (ຈິນຕະນາການ), ດ້ານລະບອບ ລະບຽບ ແລະ ກົນໄກຄຸ້ມຄອງບໍລິຫານ, ດ້ານກົນໄກການປະສານງານ, ດ້ານກົງຈັກການຈັດຕັ້ງ, ດ້ານການພັດທະນາບຸກຄະລາກອນ, ດ້ານການພັດທະນາເສດຖະກິດ ຂອງຂະແໜງການ ລວມໄປເຖິງການມີສ່ວນຮ່ວມ ແລະ ການປະກອບສ່ວນຂອງປະຊາຊົນ ແລະ ພາກທຸລະກິດ, ດ້ານຄວາມເປັນເຈົ້າການຂອງອຳນາດການປົກຄອງທຸກຂັ້ນ,ດ້ານຄວາມສາມາດໃນການຊີ້ນຳ-ບັນຊາວຽກງານຂອງຄະນະພັກຂັ້ນຕ່າງໆ ເຫຼົ່ານີ້ເປັນຕົ້ນ.

IV ທິດທາງ ແຜນການສືບຕໍ່ຈັດຕັ້ງປະຕິບັດວຽກງານ 3 ສ້າງໃນຂະແໜງ ອຄ

ໂດຍອີງໃສ່ຜົນສຳເລັດ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດເຮັດທົດ ສາມ ສ້າງ ໃນຂະແໜງອຸດສາຫະກຳ ແລະ ການຄ້າ ໃນໄລຍະຜ່ານມາ, ສະເໜີໃຫ້ບັນດາກົມ, ພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງ ແລະ ບັນດາແຂວງ ກຳນົດທິດທາງ ແຜນການ ແລະ ວຽກງານຈຸດສຸມ ເພື່ອສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ 3 ສ້າງຂອງຂະແໜງອຸດສາຫະກຳ ແລະ ການຄ້າໃນຊຸມປີຕໍ່ໜ້າໃຫ້ໄດ້ຮັບຜົນສຳເລັດ ແລະ ເປັນຮູບປະທຳຫຼາຍຂຶ້ນກວ່າເກົ່າ.

<u>ໝາຍເຫດ</u> : ຮ່າງຂໍ້ເຈາະຈີ້ມນີ້ ໄດ້ແຍກອອກເປັນ 2 ຂັ້ນ ( ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ) ເພື່ອສາມາດຈຳແນກໃຫ້ເຫັນພາລະບົດບາດ, ຄວາມຮັບຜິດຊອບ ລວມທັງ ຜົນສຳເລັດຂອງແຕ່ລະຂັ້ນໃນການຈັດຕັ້ງປະຕິບັດວຽກງານເຮັດທົດລອງ 3 ສ້າງ, ແນ່ນອນວ່າ ເນື້ອໃນຕ່າງໆ ອາດຍັງບໍ່ທັນຄົບຖ້ວນ, ໃນເວລາສະຫຼຸບຕີລາຄາຕົວຈິງ ຂໍໃຫ້ແຕ່ລະພາກສ່ວນເພີ່ມເຕີມເຂົ້າໃສ່ ຕາມຄວາມເໝາະສົມ.

ພາກສ່ວນໃດທີ່ມີເງື່ອນໄຂ ກໍ່ສາມາດສົ່ງເອກະສານບົດສະຫຼຸບຜ່ານທາງອີເມລ ຫຼື ທາງແຟກ ຕາມທີ່ຢູ່ ແລະ ເບີຕິດຕໍ່ພົວພັນຂ້າງລຸ່ມນີ້

<u>ເບີຕິດຕໍ່ພົວພັນ</u>: 020 9977 9694 (ທ່ານ ພຸດທະວັນ ນັນທະວົງ, ຮອງຫົວໜ້າຫ້ອງການ, ຫົວໜ້າກອງເລຂາ, ທີ່ຢູ່ອີເມລ phouth01@hotmail.com )
ເບີໂທ/ແຟກ: 021 453 985, ພະແນກເລຂານຸການ, ທ່ານ ນ ຂັນທອງ ອິນຕະນາມ ( 020 9929 2797)